ທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ນະຄອນຫຼວງວຽງຈັນ, ວັນທີ: 30/04/2021

ບົດບັນທຶກ
ກອງປະຊຸມສາມັນຜູ້ຖືຮຸ້ນ ທຄຕລ ປະຈຳປີ 2020.
ວັນທີ 30/04/2021

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ໄດ້ຈັດກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2020 (ຕໍ່ໄປນີ້ຮຽກວ່າ: "ກອງປະຊຸມ") ຂຶ້ນໃນເວລາ 14:15 ໂມງ ຂອງວັນທີ 30 ເມສາ 2021 ທີ່ຫ້ອງປະຊຸມ ຊັ້ນ 3 ໂຮງແຮມເມືອງແຫ່ງ, ນະຄອນຫຼວງວຽງຈັນ, ໂດຍການເປັນປະທານຂອງ ທ່ານ ຄຳສຸກ ສຸນດາລາ, ຮອງ ປະທານສະພາບໍລິຫານ ທຄຕລ ພ້ອມດ້ວຍສະມາຊິກສະພາບໍລິຫານ ທຄຕລ, ມີຜູ້ຖືຮຸ້ນເຂົ້າຮ່ວມດ້ວຍຕົນເອງຈຳນວນ 16 ທ່ານ, ຜູ້ມອບສິດຈຳນວນ 161 ທ່ານ ຊຶ່ງລວມຈຳນວນຮຸ້ນທັງໝົດທີ່ເຂົ້າຮ່ວມກອງປະຊຸມເທົ່າກັບ 166.877.493 ຮຸ້ນ, ນັບທັງ 6.556.313 ຮຸ້ນ ທີ່ຖືກມອບສິດ, ບັນລຸອັດຕາສ່ວນ 80,336% ຂອງຈຳນວນຮຸ້ນ ທຄຕລ ທັງໝົດ ແລະ ຖືວ່າ ຄົບອົງປະຊຸມ ເພື່ອໃຫ້ສາມາດດຳເນີນກອງປະຊຸມໄດ້ຕາມກົດລະບຽບຂອງ ທຄຕລ ແລະ ກົດໝາຍທີ່ກ່ຽວຂ້ອງ. ສຳລັບຮຸ້ນທີ່ບໍ່ໄດ້ເຂົ້າຮ່ວມກອງປະຊຸມມີຈຳນວນ 40.845.807 ຮຸ້ນ ເທົ່າກັບ 19,664% ຂອງຈຳນວນຮຸ້ນ ທັງໝົດ.

ປະທານກອງປະຊຸມ ໄດ້ແນະນຳ ລະບຽບການດຳເນີນກອງປະຊຸມ ແລະ ວິທີລົງຄະແນນສຽງ. ຈາກນັ້ນກອງປະຊຸມຈຶ່ງໄດ້ດຳເນີນແຕ່ລະວາລະຕາມລຳດັບ.

ກອງປະຊຸມ ໄດ້ພິຈາລະນາ, ມີຄຳເຫັນ ແລະ ມີການຕົກລົງໃນແຕ່ລະວາລະ ດັ່ງນີ້:

ວາລະທີ 1: ລາຍງານການຈັດຕັ້ງປະຕິບັດມະຕິຂອງກອງປະຊຸມຜູ້ຖືຮຸ້ນປະຈຳປີ 2019

ທ່ານ ພູຂົງ ຈັນທະຈັກ, ຜູ້ອຳນວຍການໃຫຍ່ ທຄຕລ ໄດ້ລາຍງານໃຫ້ກອງປະຊຸມຮັບຊາບ ການຈັດຕັ້ງປະຕິບັດມະຕິກອງປະຊຸມຜູ້ຖືຮຸ້ນ ທຄຕລ ປະຈຳປີ 2019.

ຈາກນັ້ນ ປະທານກອງປະຊຸມ ໄດ້ເປີດໂອກາດໃຫ້ຜູ້ຖືຮຸ້ນມີຄຳຖາມຕໍ່ວາລະນີ້, ແຕ່ບໍ່ມີຄຳຖາມຈາກຜູ້ຖືຮຸ້ນ.

☞ **ວາລະນີ້ ບໍ່ມີການລົງຄະແນນສຽງ**, ກອງປະຊຸມ ຮັບຊາບຕໍ່ການລາຍງານ;

ວາລະທີ 2: ພິຈາລະນາ ແລະ ຮັບຮອງບົດບັນທຶກຂອງກອງປະຊຸມຜູ້ຖືຮຸ້ນ ທຄຕລ ປະຈຳປີ 2019:

ທ່ານພູຂົງ ຈັນທະຈັກ, ຜູ້ອຳນວຍການໃຫຍ່ ທຄຕລ ໄດ້ນຳສະເໜີເນື້ອໃນບົດບັນທຶກກອງປະຊຸມຜູ້ຖືຮຸ້ນ ປະຈຳປີ 2020 ຈັດຂຶ້ນໃນວັນທີ 29 ພຶດສະພາ 2020, ເຊິ່ງບົດບັນທຶກດັ່ງກ່າວ ໄດ້ຖືກເປີດເຜີຍຢ່າງສອດຄ່ອງກັບກົດລະບຽບທີ່ກ່ຽວຂ້ອງແລ້ວ;

ຈາກນັ້ນ ປະທານກອງປະຊຸມ ເປີດໂອກາດໃຫ້ຜູ້ຖືຮຸ້ນມີຄຳຖາມຕໍ່ວາລະນີ້, ແຕ່ບໍ່ມີຄຳຖາມຈາກຜູ້ຖືຮຸ້ນ.

☞ ກອງປະຊຸມ ໄດ້ມີມະຕິຮັບຮອງບົດບັນທຶກຂອງກອງປະຊຸມຜູ້ຖືຮຸ້ນ ທຄຕລ ປະຈຳປີ 2019 ດ້ວຍການລົງ ຄະແນນສຽງໃນກອງປະຊຸມດັ່ງນີ້:

- ເຫັນດີຈຳນວນ: 166.877.493 ສຽງ, ເທົ່າກັບ 100% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.
- ບໍ່ເຫັນດີຈຳນວນ: 0 ສຽງ, ເທົ່າກັບ 0% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 3: ພິຈາລະນາ ແລະ ຮັບຮອງບົດລາຍງານ ສະພາບການດຳເນີນງານຂອງ ທຄຕລ ໃນປີ 2020.

ທ່ານ ພູຂົງ ຈັນທະຈັກ, ຜູ້ອຳນວຍການໃຫຍ່ ທຄຕລ ໄດ້ລາຍງານໂດຍຫຍໍ້ໃຫ້ກອງປະຊຸມຮັບຊາບ ກ່ຽວກັບ ບາງ ເນື້ອໃນສຳຄັນຂອງບົດລາຍງານສະພາບການດຳເນີນງານຂອງ ທຄຕລ ໃນປີ 2020:

- ໄດ້ຈັດກອງປະຊຸມສາມັນຜູ້ຖືຮຸ້ນ ທຄຕລ ປະຈຳປີ 2019 ຈຳນວນ 1 ຄັ້ງ ພ້ອມທັງສຳເລັດການຈ່າຍເງິນປັນຜົນ ປະຈຳປີ 2019 ຈຳນວນ 813 ກີບ/ຮຸ້ນ ໃຫ້ຜູ້ຖືຮຸ້ນ ທຄຕລ.
- ໄດ້ຈັດກອງປະຊຸມສະພາບໍລິຫານສະໄຫມສາມັນ 4 ຄັ້ງ, ກອງປະຊຸມສະພາບໍລິຫານສະໄຫມວິສາມັນ 8 ຄັ້ງ
- ສຳເລັດການເປີດເຜີຍເອກະສານລາຍງານການເງິນ ທຄຕລ ທັງໝົດ 04 ຄັ້ງຕາມມາດຕະຖານສາກົນ.
- ອອກນະໂຍບາຍສິນເຊື່ອ ເພື່ອແກ້ໄຂລູກຄ້າທີ່ໄດ້ຮັບຜົນກະທົບຈາກການລະບາດຂອງພະຍາດ COVID-19
- ທຄຕລ ໄດ້ເອົາໃຈໃສ່ປ້ອງກັນການແຜ່ລະບາດເຊື້ອຈຸລະໂຣກ COVID-19 ໂດຍໄດ້ສ້າງຕັ້ງຄະນະຮັບຜິດຊອບ ວຽກງານປ້ອງກັນພະຍາດດັ່ງກ່າວ;.
- ຮ່ວມມືກັບກົມທີ່ດິນ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ໃນການເຊື່ອມຕໍ່ ແລະ ພັດທະນາ ລະບົບຖານຂໍ້ມູນທີ່ດິນເພື່ອຫັນເປັນທັນສະໄໝ;
- ໄດ້ພັດທະນາຟັງຊັນໃນ BCEL One ຄື: FastTrack, FastCash ແລະ OneCash, OneCare, QR Withdrawal ແລະ BCEL i-Bank Version 4;
- ໃນປີ 2020 ທຄຕລ ກໍ່ຍັງໄດ້ຮັບລາງວັນດີເດັ່ນດ້ານບໍລິການຜ່ານລະບົບມືຖື ແລະ ການຊຳລະສະສາງແຫ່ງປີ ຈາກອາລະສານການທະນາຄານ ແລະ ການເງິນອາຊີ ຈາກການສະເໜີບໍລິການຮັບຊຳລະຄ່າທຳນຽມທາງ;
- ໄດ້ຍົກຂະແໜງຕ້ານການຟອກເງິນ ເປັນພະແນກສະກັດກັ້ນການຟອກເງິນ;
- ໃນປີ 2020 ໄດ້ຮັບພະນັກງານວິຊາການໃໝ່ທັງໝົດ 106 ຄົນ, ເທົ່າກັບ 63,85% ທຽບໃສ່ແຜນການປີ.
- ໃນປີ 2020 ສາມາດຂະຫຍາຍໜ່ວຍບໍລິການໄດ້ທັງໝົດ 06 ໜ່ວຍບໍລິການ ເທົ່າກັບ 50% ຂອງແຜນການ.

ຈາກນັ້ນ ປະທານກອງປະຊຸມ ຈຶ່ງໄດ້ສະເໜີໃຫ້ຜູ້ຖືຮຸ້ນມີຄຳຖາມຕໍ່ວາລະນີ້, ບໍ່ມີຄຳຖາມ.

☞ **ກອງປະຊຸມ ໄດ້ມີມະຕິຮັບຮອງເອົາບົດລາຍງານການດຳເນີນງານຂອງ ທຄຕລ ໃນປີ 2020 ດ້ວຍ ການລົງ ຄະແນນສຽງໃນກອງປະຊຸມດັ່ງນີ້**:

- ເຫັນດີຈຳນວນ: 166.877.493 ສຽງ, ເທົ່າກັບ 100% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.
- ບໍ່ເຫັນດີຈຳນວນ: 0 ສຽງ, ເທົ່າກັບ 0% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 4: ພິຈາລະນາ ແລະ ຮັບຮອງເອົາຜົນການດຳເນີນທຸລະກິດຂອງ ທຄຕລ ປະຈຳປີ 2020:

ທ່ານພູຂົງ ຈັນທະຈັກ, ຜູ້ອຳນວຍການໃຫຍ່ ທຄຕລ ໄດ້ແຈ້ງຜົນການດຳເນີນທຸລະກິດປະຈຳປີ 2020 ທີ່ໄດ້ຮັບ ການກວດສອບຈາກ ບໍລິສັດ PWC ແລະ ຮັບຮອງຈາກສະພາບໍລິຫານ ທຄຕລ ມີດັ່ງນີ້:

- ຍອດຊັບສິນ/ໜີ້ສິນ: 53.897.380 ລ້ານກີບ;
- ຍອດສິນເຊື່ອທັງໝົດ: 29.216.946 ລ້ານກີບ;
- ຍອດເງິນຝາກທັງໝົດ: 47.974.516 ລ້ານກີບ;

- ກຳໄລກ່ອນອາກອນ: 279.417 ລ້ານກີບ;
- ກຳໄລຫຼັງອາກອນ: 223.036 ລ້ານກີບ;

ປະທານກອງປະຊຸມ ໄດ້ເປີດໂອກາດໃຫ້ຜູ້ຖືຮຸ້ນມີຄຳຖາມຕໍ່ວາລະນີ້, ເຊິ່ງມີຄຳຖາມ ແລະ ການຊີ້ແຈງດັ່ງນີ້:

❖ **ຄຳຖາມຈາກຜູ້ຖືຮຸ້ນ ຈາກທະນາຄານແຄນນາດຽນ**: ຕົວເລກສິນເຊື່ອ ທຄຕລ ປີ 2020 ທຽບໃສ່ເງິນຝາກ ເຫັນວ່າເພີ່ມຂຶ້ນຫຼາຍທຽບປີຜ່ານມາ, ຢາກຊາບຕົວເລກ NPL ຂອງ ທຄຕລ ມີເທົ່າໃດ, ທຄຕລ ມີມາດຕະການທີ່ແກ້ໄຂ NPL ແນວໃດ?

☞ **ທ່ານ ພູຂົງ ຈັນທະຈັກ:** NPL ທຄຕລ ໃນປີ 2020 ເພີ່ມຂຶ້ນ ຢູ່ໃນລະດັບບໍ່ເກີນ 3% ຂອງຍອດສິນເຊື່ອທັງໝົດ, ທຄຕລ ກໍ່ໄດ້ເອົາໃຈໃສ່ແກ້ໄຂຕາມລະບຽບການທີ່ມີ, ໃນໄລຍະທີ່ມີການລະບາດຂອງພະຍາດໂຄວິດ-19 ທຄຕລ ກໍ່ໄດ້ອີງໃສ່ລະບຽບ ນະໂຍບາຍ ທີ່ ທະນາຄານແຫ່ງ ສປປ ລາວ ວາງອອກ ມາຄົ້ນຄວ້າ ປັບເຂົ້າກັບລະບຽບການຂອງ ທຄຕລ ພ້ອມທັງໄດ້ຕິດຕາມສະພາບການຂອງລູກຄ້າ ແລະ ວິເຄາະຜົນກະທົບຕົວຈິງຂອງລູກຄ້າ ເພື່ອກຳນົດການປະຕິບັດ ນະໂຍບາຍຕໍ່ລູກຄ້າແຕ່ລະລາຍ ເຊັ່ນ: ການເລື່ອນຊຳລະຕົ້ນທຶນ ແລະ ດອກເບ້ຍ, ການປັບປຸງໂຄງສ້າງ. ຖ້າມີຄວາມຈຳເປັນກໍ່ມີການຂາຍຫຼັກຊັບ ເພື່ອນຳມາຊຳລະໜີ້.

❖ **ຄຳຖາມຈາກ ທ່ານ ພົງສະຫວັດ ລືນາມ, ຕາງໜ້າຜູ້ຖືຮຸ້ນ ຈາກບໍລິສັດຫຼັກຊັບລາວຈີນ**:

- ສັດສ່ວນການປ່ອຍສິນເຊື່ອ ສ່ວນໃຫຍ່ຂອງ ທຄຕລ ແມ່ນຂະແໜງອຸດສະຫະກຳ ກວມ 51% ຢາກຮູ້ວ່າໃນປີ 2021 ສັດສ່ວນການປ່ອຍສິນເຊື່ອຂອງ ທຄຕລ ຈະປ່ຽນແປງແນວໃດ?;
- ທຄຕລ ມີນະໂຍບາຍການປ່ອຍສິນເຊື່ອ SME ບໍ່?;
- ໃນສະພາບການທີ່ມີການແຜ່ລະບາດຂອງພະຍາດໂຄວິດ-19 ແຜນການຂະຫຍາຍຕາໜ່າງບໍລິການ- ແຜນການຮັບພະນັກງານໃໝ່ ມີຄວາມເໝາະສົມແລ້ວບໍ່ ເພາະເຫັນວ່າຈະມີຄ່າໃຊ້ຈ່າຍເພີ່ມ;
- ທຄຕລ ມີການຄິດໄລ່, ປະເມີນ ລາຍຈ່າຍພະນັກງານ ແລະ ລາຍຮັບ/ຫົວຄົນ ເພື່ອມີການຄວບຄຸມລາຍຈ່າຍບໍ່?;
- ການປ່ຽນລະບົບ Core banking ຂອງ ທຄຕລ, ການ Update ລະບົບຈະມີຮຽບຮ້ອຍຈັກປີ, ຕົ້ນທຶນຄຸ້ມບໍ່?

☞ **ທ່ານ ພູຂົງ ຈັນທະຈັກ:** ຕົວເລກການປ່ອຍສິນເຊື່ອຂອງ ທຄຕລ ໃນຂະແໜງພະລັງງານ ແລະ ອຸດສະຫະກຳ ກວມອັດຕາສ່ວນສູງ ເຊິ່ງ ໄລຍະຜ່ານມາ ທຄຕລ ກໍ່ໄດ້ພະຍາຍາມຫຼຸດຜ່ອນໃນການປ່ອຍກູ້ໃຫ້ຂະແໜງການດັ່ງກ່າວ ເນັ້ນປ່ອຍກູ້ໃຫ້ລູກຄ້າຂະແໜງການອື່ນທີ່ອາດຈະມີປະສິດທິຜົນ ແລະ ການພັດທະນາດີກວ່າ;

- ທຄຕລ ໄດ້ມີນະໂຍບາຍສິນເຊື່ອເພື່ອສົ່ງເສີມລູກຄ້າ SME, ເຊິ່ງ ທຄຕລ ກໍ່ໄດ້ສ້າງເປັນລະບຽບການສະເພາະຂອງຕົນທີ່ອີງໃສ່ລະບຽບຂອງລັດຖະບານມາຜັນຂະຫຍາຍ, ຜ່ານມາກໍ່ໄດ້ປ່ອຍກູ້ໃຫ້ລູກຄ້າຈຳນວນຫຼາຍສົມຄວນ ແລະ ມີແຜນໃນການສົ່ງເສີມໃນຕໍ່ໜ້າໂດຍໄດ້ ສົມທົບກັບສະພາການຄ້າແລະ ອຸດສາຫະກຳແຫ່ງຊາດ ເພື່ອແລກປ່ຽນ ຂໍ້ມູນນຳກັນ ແລະ ເພື່ອສົ່ງເສີມກຸ່ມລູກຄ້າເປົ້າໝາຍໃຫ້ສາມາດເຂົ້າເຖິງແຫຼ່ງທຶນ.
- ການຮັບພະນັກງານຂອງ ທຄຕລ ແມ່ນໄດ້ປະຕິບັດອີງຕາມຄວາມຈຳເປັນຕົວຈິງໃນການຂະຫຍາຍໜ້າວຽກ-ຂະຫຍາຍຕາໜ່າງບໍລິການຂອງ ທຄຕລ ໃນແຕ່ລະໄລຍະ, 2 ປີຜ່ານມາການຮັບພະນັກງານ ບໍ່ໄດ້ຮັບເຕັມຕາມແຜນທີ່ຂຶ້ນໄວ້, ທຄຕລ ກໍ່ໄດ້ພະຍາຍາມຄຸ້ມຄອງລາຍຈ່າຍທີ່ຕິດພັນໃຫ້ຢູ່ໃນຄວາມເໝາະສົມຂອງແຜນການ, ການວິເຄາະລາຍຮັບລາຍຈ່າຍຕໍ່ຫົວຄົນກໍ່ໄດ້ມີການຄິດໄລ່ ເຊິ່ງ ທຄຕລ ກໍ່ມີຄວາມພະຍາຍາມຈະປັບປຸງຕື່ມໃຫ້ດີຂຶ້ນໃນຕໍ່ໜ້າ;
- ກ່ຽວກັບການປ່ຽນ Core banking ໃໝ່, ລະບົບເກົ່າແມ່ນໄດ້ໃຊ້ມາເປັນເວລາ 10 ກວ່າປີແລ້ວ ການ Update ລະບົບ ແມ່ນມີຄວາມຈຳເປັນ ເນື່ອງຈາກຄ່າບຳລຸງຮັກສາປະຈຳປີຂອງລະບົບເດີມມີມູນຄ່າສູງ, ການພັດທະນາຜະລິດຕະພັນແຕ່ລະຄັ້ງມີຄ່າໃຊ້ຈ່າຍສູງ ແລະ ມີຂໍ້ຈຳກັດໃນການພັດທະນາ; ການປ່ຽນລະບົບ Core banking ໃໝ່ ໄດ້ດຳເນີນການໃນອາທິດຜ່ານມາ ມີຜົນສຳເລັດດ້ວຍດີ, ການປ່ຽນລະບົບ ກໍ່ເພື່ອປະສິດທິພາບ ແລະ ການຂະຫຍາຍຜະລິດຕະພັນໃນຕໍ່ໜ້າໃຫ້ດີຂຶ້ນເກົ່າ, ຄາດວ່າການນຳໃຊ້ Core banking ໃໝ່ນີ້ ຈະນຳໃຊ້ໃນໄລຍະຍາວສົມຄວນ;

☞ **ກອງປະຊຸມ ໄດ້ມີມະຕິຮັບຮອງ ຜົນການດຳເນີນທຸລະກິດຂອງ ທຄຕລ ປະຈຳປີ 2020 ດ້ວຍການ ລົງ ຄະແນນສຽງໃນກອງປະຊຸມດັ່ງນີ້**:

- ເຫັນດີຈຳນວນ: 166.877.493 ສຽງ, ເທົ່າກັບ 100% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.
- ບໍ່ເຫັນດີຈຳນວນ: 0 ສຽງ, ເທົ່າກັບ 0% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 5: ພິຈາລະນາ ແລະ ຮັບຮອງເງິນປັນຜົນປະຈຳປີ 2020:

ທ່ານ ພູຂົງ ຈັນທະຈັກ, ຜູ້ອຳນວຍການໃຫຍ່ ທຄຕລ ສະເໜີກອງປະຊຸມພິຈາລະນາ ແລະ ຮັບຮອງການຈ່າຍເງິນປັນຜົນໃຫ້ຜູ້ຖືຮຸ້ນ ຈາກຕົວເລກກຳໄລປະຈຳປີ 2020 ຂອງ ທຄຕລ ຫຼັງຈາກຫັກອາກອນກຳໄລໃນທຸລະກິດ, ສ້າງຄັງຕ່າງໆຕາມລະບຽບການ ສະເໜີປັນຜົນໃຫ້ຜູ້ຖືຮຸ້ນໃນຈຳນວນທັງໝົດ 116.325,05 ລ້ານກີບ, ເທົ່າກັບ 560 ກີບ/ຮຸ້ນ; ການຈ່າຍເງິນປັນຜົນຈະໄດ້ປະຕິບັດໃຫ້ສຳເລັດພາຍໃນວັນທີ 18 ພຶດສະພາ 2021.

ຈາກນັ້ນ ປະທານກອງປະຊຸມ ເປີດໂອກາດໃຫ້ຜູ້ຖືຮຸ້ນມີຄຳຖາມຕໍ່ວາລະນີ້, ແຕ່ບໍ່ມີຄຳຖາມຈາກຜູ້ຖືຮຸ້ນ.

☞ **ກອງປະຊຸມ ໄດ້ມີມະຕິຮັບຮອງ ເງິນປັນຜົນປະຈຳປີ 2020 ດ້ວຍການລົງ ຄະແນນສຽງໃນກອງ ປະຊຸມດັ່ງນີ້**:

- ເຫັນດີຈຳນວນ: 166.877.493 ສຽງ, ເທົ່າກັບ 100% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.
- ບໍ່ເຫັນດີຈຳນວນ: 0 ສຽງ, ເທົ່າກັບ 0% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 6: ພິຈາລະນາແລະຮັບຮອງເອົາແຜນການປີ 2021:

ທ່ານ ພູຂົງ ຈັນທະຈັກ, ຜູ້ອຳນວຍການໃຫຍ່ ທຄຕລ ສະເໜີກອງປະຊຸມພິຈາລະນາຮັບຮອງ ແຜນການປະຈຳປີ 2021 ຂອງ ທຄຕລ ດັ່ງນີ້:

- ຍອດຊັບສິນ: 56.893.300 ລ້ານກີບ, ທຽບໃສ່ການປະຕິບັດປີ 2020 ເພີ່ມຂຶ້ນ 5,56%;
- ຍອດເງິນຝາກ: 50.300.000 ລ້ານກີບ, ທຽບໃສ່ການປະຕິບັດປີ 2020 ເພີ່ມຂຶ້ນ 4,85%;
- ຍອດເງິນກູ້ທັງໝົດ: 29.743.000 ລ້ານກີບ, ທຽບໃສ່ການປະຕິບັດປີ 2020 ເພີ່ມຂຶ້ນ 1,80%;
- ກຳໄລກ່ອນອາກອນ: 314.000 ລ້ານກີບ, ທຽບໃສ່ປະຕິບັດ 2020 ເພີ່ມຂຶ້ນ 12,38%.
- ແຜນຮັບພະນັກງານໃໝ່ ປະກອບໃຫ້ ທຄຕລ ທົ່ວລະບົບ ຈຳນວນ 87 ຄົນ,
- ແຜນການຂະຫຍາຍຕາໜ່າງບໍລິການອີກ 8 ໜ່ວຍບໍລິການ ໃນທົ່ວປະເທດ ແລະ ຍົກລະດັບໜ່ວຍບໍລິການ ປະຈຳແຂວງໄຊສົມບູນ ໃຫ້ເປັນສາຂາໃນທ້າຍປີ 2021.
- ແຜນການນຳໃຊ້ທຶນເພື່ອປະກອບອັດຖຕັກນິກ, ກໍ່ສ້າງ ແລະ ສ້ອມແປງທັງໝົດ: 335,73 ຕື້ກີບ ແລະ ແຜນຄາດວ່າຈະໂອນເປັນຊັບສົມບັດຄົງທີ່ ເປັນຈຳນວນເງິນທັງໝົດ: 253,18 ຕື້ກີບ.

ໃນກໍລະນີທີ່ມີການປ່ຽນແປງໃດໆໃນອະນາຄົດ ສະເໜີໃຫ້ກອງປະຊຸມຜູ້ຖືຮຸ້ນມອບສິດໃຫ້ສະພາບໍລິຫານ ພິຈາ ລະນາປັບປຸງແຜນການປະຈຳປີ 2021 ຕາມຄວາມເໝາະສົມ.

ຈາກນັ້ນ ປະທານກອງປະຊຸມ ເປີດໂອກາດໃຫ້ຜູ້ຖືຮຸ້ນມີຄຳຖາມຕໍ່ວາລະນີ້, ແຕ່ບໍ່ມີຄຳຖາມຈາກຜູ້ຖືຮຸ້ນ.

☞ **ກອງປະຊຸມ ໄດ້ມີມະຕິຮັບຮອງ ແຜນການປີ 2021 ຂອງ ທຄຕລ ດ້ວຍການລົງ ຄະແນນສຽງໃນ ກອງປະຊຸມດັ່ງນີ້**:

- ເຫັນດີຈຳນວນ: 166.877.493 ສຽງ, ເທົ່າກັບ 100% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.
- ບໍ່ເຫັນດີຈຳນວນ: 0 ສຽງ, ເທົ່າກັບ 0% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 7: ພິຈາລະນາ-ຮັບຮອງຜູ້ກວດສອບອິດສະຫຼະ ປະຈຳປີ 2021:

ທ່ານ ພູຂົງ ຈັນທະຈັກ, ຜູ້ອຳນວຍການໃຫຍ່ ທຄຕລ ສະເໜີກອງປະຊຸມ ຮັບຮອງເອົາການແຕ່ງຕັ້ງບໍລິສັດ PWC ເປັນຜູ້ກວດສອບອິດສະຫຼະຂອງ ທຄຕລ ປະຈຳປີ 2021, ລາຄາກວດສອບ ແລະ ທົບທວນຂອບເຂດເງິນກູ້ ແມ່ນ 100.000 ໂດລາສະຫະລັດ. ການບໍລິການກວດສອບລວມມີການກວດສອບຕາມມາດຖານສາກົນ ແລະ ມາດຖານລາວ ເປັນພາສາລາວພາສາອັງກິດ, ທົບທວນຖານະການເງິນປະຈຳ 6 ເດືອນ ແລະ ປະຈຳປີ.

ຈາກນັ້ນ ປະທານກອງປະຊຸມ ເປີດໂອກາດໃຫ້ຜູ້ຖືຮຸ້ນມີຄຳຖາມຕໍ່ວາລະນີ້, ແຕ່ບໍ່ມີຄຳຖາມຈາກຜູ້ຖືຮຸ້ນ.

☞ **ກອງປະຊຸມ ໄດ້ມີມະຕິຮັບຮອງ ຜູ້ກວດສອບອິດສະຫຼະ ປະຈຳປີ 2021 ຂອງ ທຄຕລ ດ້ວຍການລົງ ຄະແນນສຽງໃນກອງປະຊຸມດັ່ງນີ້**:

- ເຫັນດີຈຳນວນ: 166.877.493 ສຽງ, ເທົ່າກັບ 100% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.
- ບໍ່ເຫັນດີຈຳນວນ: 0 ສຽງ, ເທົ່າກັບ 0% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 8: ພິຈາລະນາ ແລະ ຮັບຮອງການແຕ່ງຕັ້ງສະພາບໍລິຫານຂອງ ທຄຕລ;

ທ່ານ ພູຂົງ ຈັນທະຈັກ, ຜູ້ອຳນວຍການໃຫຍ່ ທຄຕລ ແຈ້ງຕໍ່ກອງປະຊຸມ: ເນື່ອງຈາກການສະເໜີລາຍຊື່ບຸກ ຄະລາກອນຂອງສະພາບໍລິຫານ ທຄຕລ ຊຸດໃໝ່ ຍັງຢູ່ໃນລະຫວ່າງການຂໍຮັບຮອງຕາມທີ່ກຳນົດໄວ້ໃນກົດໝາຍວ່າດ້ວຍ ທະນາຄານທຸລະກິດ, ສະເໜີກອງປະຊຸມພິຈາລະນາໃຫ້ສະພາບໍລິຫານຊຸດປະຈຸບັນສືບຕໍ່ປະຕິບັດໜ້າທີ່ໄປຈົນກວ່າ ສະພາບໍລິຫານຊຸດໃໝ່ໄດ້ຮັບການແຕ່ງຕັ້ງຈາກກອງປະຊຸມຜູ້ຖືຮຸ້ນຄັ້ງຕໍ່ໄປ.

ປະທານກອງປະຊຸມ ເປີດໂອກາດໃຫ້ຜູ້ຖືຮຸ້ນມີຄຳຖາມຕໍ່ວາລະນີ້, ແຕ່ບໍ່ມີຄຳຖາມຈາກຜູ້ຖືຮຸ້ນ.

☞ **ກອງປະຊຸມ ໄດ້ມີມະຕິຮັບຮອງ ໃຫ້ສະພາບໍລິຫານຊຸດປະຈຸບັນສືບຕໍ່ປະຕິບັດໜ້າທີ່ໄປຈົນກວ່າ ສະພາບໍລິຫານຊຸດໃໝ່ໄດ້ຮັບການແຕ່ງຕັ້ງຈາກກອງປະຊຸມຜູ້ຖືຮຸ້ນຄັ້ງຕໍ່ໄປ ດ້ວຍການລົງ ຄະແນນ ສຽງໃນກອງປະຊຸມດັ່ງນີ້**:

- ເຫັນດີຈຳນວນ: 166.877.493 ສຽງ, ເທົ່າກັບ 100% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.
- ບໍ່ເຫັນດີຈຳນວນ: 0 ສຽງ, ເທົ່າກັບ 0% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 9: ພິຈາລະນາ ແລະ ຮັບຮອງເອົາແຜນຍຸດທະສາດຂອງ ທຄຕລ ໄລຍະປີ 2021-2025:

ທ່ານ ພູຂົງ ຈັນທະຈັກ, ຜູ້ອຳນວຍການໃຫຍ່ ທຄຕລ ນຳສະເໜີ ແຜນຍຸດທະສາດຂອງ ທຄຕລ ເຊິ່ງໄດ້ກຳນົດ ບັນດາທິດທາງ, ຄາດໝາຍ ແລະ ແຜນການຈັດຕັ້ງປະຕິບັດ ພາຍໃຕ້ວິໄສທັດ ເປັນທະນາຄານທີ່ເຂັ້ມແຂງ ທັນສະໄໝ ໄດ້ມາດຖານສາກົນ . ໃນນັ້ນ, ໄດ້ກຳນົດ 3 ຍຸດທະສາດໃຫຍ່ ຄື:

- ຍຸດທະສາດທີ 1: ສ້າງຄວາມເຂັ້ມແຂງໃຫ້ອົງກອນຢ່າງຮອບດ້ານ
- ຍຸດທະສາດທີ 2: ຍຸດທະສາດທັນເປັນທັນສະໄໝ ໂດຍນຳໃຊ້ເຕັກໂນໂລຊີ ແລະ ນະວັດຕະກຳໃໝ່ໆໃນການ ດຳເນີນທຸລະກິດ ກ້າວສູ່ຍຸກເສດຖະກິດດິຈິຕອລ
- ຍຸດທະສາດທີ 3: ຍຸດທະສາດສ້າງການຄຸ້ມຄອງ ແລະ ບໍລິການຕາມມາດຕະຖານສາກົນ

ປະທານກອງປະຊຸມ ໄດ້ເປີດໂອກາດໃຫ້ຜູ້ຖືຮຸ້ນມີຄຳຖາມຕໍ່ວາລະນີ້, ເຊິ່ງມີຄຳຖາມ ແລະ ການຊີ້ແຈງດັ່ງນີ້:

❖ **ຄຳຖາມຈາກ ທ່ານ ພົງສະຫວັດ ລືນາມ, ຕາງໜ້າຜູ້ຖືຮຸ້ນຈາກບໍລິສັດຫຼັກຊັບລາວຈີນ**:

- ແຜນການປະຕິບັດມາດຕະຖານການເງິນຕາມມາດຖານສາກົນ IFRS ໃນອີກ 5 ປີຈະສາມາດປະຕິບັດໄດ້ບໍ່?,
- ສັດສ່ວນລາຍຮັບຂອງ ທຄຕລ ແບບ Interest /Non Interest ຈະຢູ່ປະມານໃດ?

☞ **ທ່ານ ພູຂົງ ຈັນທະຈັກ:** ໃນແຜນຍຸດທະສາດໃນການພັດທະນາຂອງ ທຄຕລ 2021-2025 ໄດ້ມີການກຳນົດການປັບປຸງບັນຊີສູ່ມາດຖານສາກົນ IFRS ແລ້ວ, ໄດ້ມີການວາງແຜນການປັບປຸງເປັນແຕ່ລະໄລຍະມີເປົ້າໝາຍໃນປີ 2025 ໃຫ້ ທຄຕລ ສາມາດຫັນສູ່ການນຳໃຊ້ລະບົບບັນຊີຕາມມາດຖານສາກົນ;

- ປະຈຸບັນລາຍຮັບຫຼັກຂອງ ທຄຕລ ມາຈາກລາຍຮັບດອກເບ້ຍ, ແຜນໃນຕໍ່ໜ້າຂອງ ທຄຕລ ແມ່ນຈະເນັ້ນໜັກ ສ້າງລາຍຮັບຈາກບໍລິການໃຫ້ຫຼາຍຂຶ້ນ, ເຊິ່ງ ທຄຕລ ກໍ່ໄດ້ເອົາໃຈໃສ່ການພັດທະນາຜະລິດຕະພັນຕ່າງໆເພື່ອຈະສ້າງຄວາມສະດວກໃຫ້ລູກຄ້າທັງເປັນການສ້າງລາຍຮັບບໍລິການຂອງ ທຄຕລ ໃຫ້ເພີ່ມຂຶ້ນໃນແຕ່ລະປີ.

☞ **ກອງປະຊຸມ ໄດ້ມີມະຕິຮັບຮອງເອົາ ແຜນຍຸດທະສາດຂອງ ທຄຕລ ໄລຍະປີ 2021-2025 ດ້ວຍການລົງ ຄະແນນສຽງໃນກອງປະຊຸມດັ່ງນີ້**:

- ເຫັນດີຈຳນວນ: 166.877.493 ສຽງ, ເທົ່າກັບ 100% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.
- ບໍ່ເຫັນດີຈຳນວນ: 0 ສຽງ, ເທົ່າກັບ 0% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 10: ພິຈາລະນາ ແລະ ຮັບຮອງການປັບປຸງກົດລະບຽບ ທຄຕລ

ທ່ານ ພູຂົງ ຈັນທະຈັກ, ຜູ້ອຳນວຍການໃຫຍ່ ທຄຕລ ນຳສະເໜີກອງປະຊຸມພິຈາລະນາຮັບຮອງ ການປັບປຸງກົດລະບຽບ ທຄຕລ ເພື່ອໃຫ້ສອດຄ່ອງກັບບັນດາກົດໝາຍ ແລະ ນິຕິກຳຂອງຜູ້ຄຸ້ມຄອງທີ່ໄດ້ມີການປັບປຸງ ເຊັ່ນ: ກົດໝາຍວ່າດ້ວຍທະນາຄານທຸລະກິດ, ກົດໝາຍວ່າດ້ວຍຫລັກຊັບ, ກົດໝາຍວ່າດ້ວຍວິສາຫະກິດ, ຂໍ້ຕົກລົງຂອງ ສຄຄຊ ວ່າດ້ວຍສະພາບໍລິຫານ, ການຫຼັກການຄຸ້ມຄອງບໍລິຫານ (CG Guideline), ຫຼັກການບາເຊ2 ແລະ ນິຕິກຳທີ່ກ່ຽວຂ້ອງກັບບໍລິສັດຈົດທະບຽນ;

ປະທານກອງປະຊຸມ ເປີດໂອກາດໃຫ້ຜູ້ຖືຮຸ້ນມີຄຳຖາມຕໍ່ວາລະນີ້, ແຕ່ບໍ່ມີຄຳຖາມຈາກຜູ້ຖືຮຸ້ນ.

☞ **ກອງປະຊຸມ ໄດ້ມີມະຕິຮັບຮອງ ການປັບປຸງກົດລະບຽບ ທຄຕລ ດ້ວຍການ ຄະແນນສຽງໃນກອງປະຊຸມດັ່ງນີ້**:

- ເຫັນດີຈຳນວນ 177 ທ່ານ ເທົ່າກັບ 100% ຂອງຈຳນວນຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ, ເຊິ່ງມີຮຸ້ນທັງໝົດ 166.877.493 ຮຸ້ນ, ເທົ່າກັບ 100% ຂອງຈຳນວນຮຸ້ນທີ່ເຂົ້າຮ່ວມກອງປະຊຸມ ແລະ ເທົ່າກັບ 80,336% ຂອງຈຳນວນຮຸ້ນ ທຄຕລ ທັງໝົດ.
- ບໍ່ເຫັນດີຈຳນວນ: 0 ທ່ານ, ເທົ່າກັບ 0% ຂອງຈຳນວນຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ.

ປະທານກອງປະຊຸມ ໄດ້ກ່າວສະແດງຄວາມຂອບໃຈຜູ້ຖືຮຸ້ນ ແລະ ຕາງໜ້າຜູ້ຖືຮຸ້ນ ທີ່ໄດ້ໃຫ້ກຽດເຂົ້າຮ່ວມກອງປະຊຸມ ພ້ອມທັງໄດ້ປະກາດປິດກອງປະຊຸມໃນເວລາ 15:30 ໂມງ ຂອງວັນດຽວກັນ.

ປະທານກອງປະຊຸມ	**ຜູ້ບັນທຶກ**
ຄຳສຸກ ສູນດາລາ	ສອນນາລິນ ແສງມະນີ